ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ເປີດນຳໃຊ້ສຳນັກງານໃໝ່ຂອງ ສາຂາ ທຫລ ພາກເໜືອ ແຂວງຊຽງຂວາງ ຢ່າງເປັນທາງການ



ໃນຕອນບ່າຍຂອງວັນທີ 23 ກຸມພາ 2021 ທີ່ ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງ ຊຽງຂວາງ (ທຫລ.ຊຂ) ໄດ້ມີພິທີເປີດນຳໃຊ້ສຳນັກງານໃໝ່ຂອງ ສາຂາ ທຫລ.ຊຂ ຂຶ້ນຢ່າງເປັນທາງການ ໂດຍການໃຫ້ກຽດເປັນປະທານຂອງທ່ານ ສອນໄຊ ສິດພະໄຊ ກຳມະການສູນກາງພັກ, ເລຂາຄະນະພັກ, ຜູ້ວ່າການ ທຫລ ແລະ ໂດຍການໃຫ້ກຽດເຂົ້າຮ່ວມໃນພິທີຂອງທ່ານ ບຸນຈັນ ສິວົງພັນ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງ ແຂວງຊຽງຂວາງ ພ້ອມດ້ວຍ ຄະນະການນຳຂອງແຂວງ, ຄະນະສາຂາ ທຫລ ປະຈຳພາກ, ຄະນະກົມພາຍໃນ ທຫລ ແລະ ແຂກຜູ້ເຂົ້າຮ່ວມຈາກພາກສ່ວນທີ່ກ່ຽວຂ້ອງ 50 ກວ່າທ່ານ.

ການສ້າງຕັ້ງສຳນັກງານໃໝ່ຂອງສາຂາ ທຫລ.ຊຂ ແມ່ນເປັນການປະຕິບັດໜ້າທີ່ການເມືອງຂອງ ທຫລ ຕາມກົດໝາຍວ່າດ້ວຍ ທຫລ ໃນການເປັນເສນາທິການໃຫ້ແກ່ພັກ ແລະ ລັດຖະບານໃນການປະຕິບັດພາລະບົດບາດໃນການຄຸ້ມຄອງມະຫາພາກທາງດ້ານເງິນຕາ, ຄຸ້ມຄອງສິນເຊື່ອຂອງລະບົບທະນາຄານ, ຮັກສາສະຖຽນລະພາບເງິນຕາແຫ່ງຊາດ, ຮັບປະກັນການຄຸ້ມຄອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ຢູ່ໃນ 3 ແຂວງພາກເໜືອ (ຊຽງຂວາງ, ຫົວພັນ, ໄຊສົມບູນ) ໃຫ້ເຂັ້ມແຂງ, ໝັ້ນຄົງ ແລະ ທັນສະໄໝ. ຊຸກຍູ້ແຜນພັດທະນາເສດຖະກິດສັງຄົມຂອງ ສປປ ລາວ ໂດຍລວມ ແລະ ໂດຍສະເພາະແມ່ນຊຸກຍູ້ການພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ.




ທ່ານຜູ້ວ່າການ ທຫລ ໄດ້ສະແດງຄວາມຂອບໃຈຕໍ່ການນໍາຂອງແຂວງຊຽງຂວາງທີ່ໄດ້ຊ່ວຍຊຸກຍູ້ ແລະ ອໍານວຍຄວາມສະດວກໃຫ້ແກ່ ທຫລ ໃນການປະຕິບັດໜ້າທີ່ການເມືອງຂອງຕົນ ນັບຕັ້ງແຕ່ມື້ສ້າງຕັ້ງສາຂາ ທຫລ.ຊຂ ໃນປີ 2017 ຈົນເຖິງປັດຈຸບັນ. ການກໍ່ສ້າງສໍານັກງານໃໝ່ຂອງ ສາຂາ ທຫລ.ຊຂ ກໍ່ເປັນໜຶ່ງໃນການຈັດຕັ້ງປະຕິບັດແຜນຍຸດທະສາດການພັດທະນາຂະແໜງການເງິນ-ເງິນຕາ ໂດຍສະເພາະການພັດທະນາພື້ນຖານໂຄງລ່າງ, ການທັນເປັນທັນສະໄໝ ເພື່ອຮັບປະກັນໜ້າທີ່ການເມືອງໃນການຄຸ້ມຄອງມະຫາພາກເງິນຕາຢູ່ທ້ອງຖິ່ນ ແລະ ເປັນການວາງແຜນການເພື່ອຮອງຮັບການຈັດຕັ້ງປະຕິບັດວຽກງານໃນອານາຄົດຍາວນານຂ້າງໜ້າຂອງ ສາຂາ ທຫລ ພາກເໜືອ ແຂວງຊຽງຂວາງ ອີກດ້ວຍ.




**# ຂ່າວ ແລະ ພາບ: ນ. ວັນປະເສີດ ສິມບຸນຂັນ**

## ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ